## ມິຊຊາອາທິດທີ 27 ກຳນົດທຳມະດາປີ A

## ວັນທີ 4 ຕຸລາ 2020



**ພຣະວໍລະສານໂດຍນັກບຸນມັດເທວ 21, 33-43**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ກ່າວກັບບັນດາຫົວໜ້າສົງແລະພວກຟາຣີເຊວວ່າ: “ພວກເຈົ້າທັງຫລາຍຈົ່ງຟັງຄຳປຽບທຽບອີກເລື່ອງໜຶ່ງ: ຍັງມີພໍ່ເຮືອນຜູ້ໜຶ່ງໄດ້ທຳສວນອະງຸ່ນໄວ້. ລາວໄດ້ເຮັດຮົ້ວອ້ອມ, ໄດ້ຂຸດອ່າງຢຽບໝາກອະງຸ່ນແລະໄດ້ສ້າງຫໍຄອຍໄວ້ໃນສວນນັ້ນ. ແລ້ວໄດ້ໃຫ້ຊາວສວນມາເຊົ່າ, ຕົວລາວເອງກໍອອກເດີນທາງໄປຕ່າງປະເທດ. ເມື່ອເຖິງລະດູເກັບໝາກອະງຸ່ນ, ລາວກໍສົ່ງພວກຄົນໃຊ້ຂອງລາວໄປຫາພວກເຊົ່າສວນເພື່ອຮັບເອົາສ່ວນແບ່ງຂອງລາວ. ແຕ່ພວກເຊົ່າສວນຈັບກຸມເອົາພວກຄົນໃຊ້ແລ້ວທຸບຕີກໍມີ, ຂ້າຖິ້ມກໍມີ, ແກ່ວງກ້ອນຫີນໃສ່ກໍມີ. ລາວສົ່ງຄົນໃຊ້ພວກໃໝ່ໄປອີກຫລາຍກວ່າເທື່ອກ່ອນ, ແລະພວກເຊົ່າສວນກໍທຳຮ້າຍພວກເຂົາດັ່ງດຽວກັນ. ເທື່ອສຸດທ້າຍ, ເຈົ້າຂອງສວນໄດ້ສົ່ງລູກຊາຍຂອງຕົນໄປ, ໂດຍຄິດໃນໃຈວ່າພວກເຂົາຄົງຈະນັບຖືລູກຂອງເຮົາ. ແຕ່ພໍເຫັນລູກຊາຍເຈົ້າຂອງສວນ, ພວກເຊົ່າສວນກໍເວົ້າກັນວ່າ: “ນີ້ແຫລະຜູ້ຮັບມໍລະດົກມາແລ້ວຈົ່ງພາກັນໄປຂ້າມັນຖິ້ມ ເພື່ອຈະໄດ້ມໍລະດົກຂອງມັນ. ແລະພວກເຂົາກໍພາກັນຫຸ້ມຈັບລູກຊາຍເຈົ້າຂອງສວນ, ຖູໄຖອອກໄປນອກສວນແລະຂ້າຖິ້ມ. ເມື່ອເຈົ້າຂອງສວນອະງຸ່ນຈະກັບມາລາວຈະເຮັດແນວໃດ ກັບພວກເຊົ່າສວນນີ້?” ພວກເຂົາທູນຕອບພຣະອົງວ່າ: “ເຈົ້າຂອງສວນກໍຈະສັ່ງຂ້າພວກໃຈອຳມະຫິດນີ້ຢ່າງບໍ່ສົງສານ, ແລະຈະເອົາສວນມອບໃຫ້ຄົນອື່ນເຊົ່າ ເພື່ອຈະເກັບໝາກຜົນໄດ້ຕາມລະດູການ”.

ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ: “ພວກເຈົ້າບໍ່ໄດ້ອ່ານໃນພຣະຄຳພີຈັກເທື່ອບໍວ່າ: ຫີນທີ່ພວກຊ່າງກໍ່ໂຍນຖິ້ມນັ້ນໄດ້ກາຍເປັນຫີນຈອດມຸມແລ້ວ, ພຣະອົງເຈົ້າຊົງບັນດານໃຫ້ເປັນດັ່ງນີ້ເກີນວ່າ ເປັນໜ້າພິດສະຫວົງແກ່ສາຍຕາຂອງພວກເຮົາ”. ສະນັ້ນ, ເຮົາຈຶ່ງກ່າວແກ່ພວກເຈົ້າວ່າ: ອານາຈັກຂອງພຣະເປັນເຈົ້າຈະຖືກຖົກຖອນຈາກພວກເຈົ້າໄປມອບໃຫ້ຄົນຊາດອື່ນທີ່ຈະປະຕິບັດໃຫ້ເກີດໝາກຜົນໄດ້”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 21, 33-43**

ໃນບົດອ່ານທີໜຶ່ງ, ບົດເພງສັກສິດແລະພຣະວໍລະສານວັນນີ້ ລ້ວນແຕ່ກ່າວເຖິງຫົວຂໍ້ດຽວກັນອັນແມ່ນສວນອະງຸ່ນ. ພວກເຮົາຈະພ້ອມກັນຊອກຫາຄວາມໝາຍຂອງສວນອະງຸ່ນ, ຜູ້ເປັນເຈົ້າຂອງສວນ ແລະຄົນທຳງານໃນສວນອະງຸ່ນນີ້.

ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາທ່ານໄດ້ເລົ່າໃຫ້ພວກເຮົາຟັງເຖິງເນື້ອຫາຂອງບົດເພງແຫ່ງສວນອະງຸ່ນ. ໃນບົດເພງນີ້, ເຈົ້າຂອງສວນອະງຸ່ນແລະຜູ້ທຳງານໃນສວນອະງຸ່ນເປັນຄົນດຽວກັນ ຄືພຣະເຈົ້າ. ສ່ວນສວນອະງຸ່ນນັ້ນແມ່ນຊົນຊາດອິສຣາແອນ. ເຖິງວ່າເຈົ້າຂອງສວນອະງຸ່ນຈະບົວລະບັດຮັກສາສວນອະງຸ່ນນີ້ຢ່າງດີ ແຕ່ສວນອະງຸ່ນນີ້ກໍບໍ່ໃຫ້ໝາກຜົນອັນດີງາມ.

ສ່ວນໃນບົດເພງສັກສິດ 79 ທີ່ພວກເຮົາຂັບຮ້ອງວັນນີ້ເປັນການນຳເອົາບົດກາວີຂອງປະພາສົກອີຊາຢາກ່ຽວກັບສວນອະງຸ່ນມາຂັບຮ້ອງເປັນບົດເພງເພື່ອໃຫ້ຜູ້ຂັບຮ້ອງແລະຜູ້ຟັງໄດ້ຈື່ຈຳວາຈາພຣະເຈົ້າຂຶ້ນໃຈແລະທຳໃຫ້ວາຈານັ້ນເກີດໝາກຜົນ.

ໃນພຣະວໍລະສານ, ນັກບຸນມັດເທວກໍໃຊ້ຄວາມປຽບທຽບກ່ຽວກັບສວນອະງຸ່ນ. ເທື່ອນີ້, ຜູ້ຮັບຟັງຄວາມປຽບທຽບແມ່ນບັນດາຫົວໜ້າສົງແລະພວກຟາຣີເຊວ. ໃນຄວາມປຽບທຽບນີ້, ເຈົ້າຂອງສວນອະງຸ່ນແລະຜູ້ທຳງານໃນສວນບໍ່ໄດ້ເປັນຄົນດຽວກັນ. ເພາະເຈົ້າຂອງສວນໄດ້ໃຫ້ຄົນອື່ນມາເຊົ່າສວນຂອງຕົນ. ສ່ວນຕົວລາວເອງກໍອອກເດີນທາງໄປຕ່າງປະເທດ. ສ່ວນຄວາມໝາຍຂອງສວນອະງຸ່ນແມ່ນຫຍັງ? ແລະຄົນທຳງານໃນສວນອະງຸ່ນແມ່ນໃຜ? ນັກບຸນມັດເທວບໍ່ໄດ້ບອກໃຫ້ພວກເຮົາຮູ້ຈັກຢ່າງຈະແຈ້ງ.

ສວນອະງຸ່ນນີ້ອາດຈະແມ່ນຊົນຊາດອິສຣາແອນດັ່ງໃນບົດອ່ານທີໜຶ່ງ. ສ່ວນຄົນທຳງານໃນສວນນີ້ອາດຈະແມ່ນບັນດາຫົວໜ້າສົງແລະພວກຟາຣີເຊວ. ແຕ່ພວກເຂົາບໍ່ໄດ້ບົວລະບັດສວນອະງຸ່ນນີ້ຢ່າງດີ, ພັດຍັງທຳຮ້າຍຄົນໃຊ້ຂອງເຈົ້າຂອງສວນ. ແລະຍິ່ງໄປກວ່ານັ້ນ, ພວກເຂົາໄດ້ຂ້າລູກຊາຍຂອງເຈົ້າຂອງສວນອີກ.

ສວນອະງຸ່ນນີ້ອາດຈະແມ່ນອານາຈັກຂອງພຣະເປັນເຈົ້າ. ສ່ວນຜູ້ທຳງານໃນສວນແມ່ນປະຊາກອນອິສຣາແອນທັງໝົດ. ແຕ່ຊົນຊາດອິສຣາແອນບໍ່ໄດ້ໃສ່ໃຈໃນການບົວລະບັດຮັກສາສວນ. ແລະພວກເຂົາເອງຍັງເປັນຜູ້ທຳຮ້າຍລູກຊາຍສຸດທີ່ຮັກຂອງເຈົ້າຂອງສວນໃຫ້ຕາຍ. ດັ່ງທີ່ພຣະເຢຊູເຈົ້າກ່າວໃນຕອນທ້າຍຂອງພຣະວໍລະສານວັນນີ້ວ່າ: "ອານາຈັກຂອງພຣະເປັນເຈົ້າຈະຖືກຖືກຖອນຈາກພວກເຈົ້າໄປມອບໃຫ້ຄົນຊາດອື່ນທີ່ຈະປະຕິບັດໃຫ້ເກີດໝາກຜົນໄດ້".

ວາຈາພຣະເຈົ້າວັນນີ້ສອນພວກເຮົາຫຍັງ? ພວກເຮົາແຕ່ລະຄົນລ້ວນແຕ່ເປັນປະຊາກອນຜູ້ເລືອກສັນຂອງພຣະເຈົ້າເໝືອນກັບປະຊາກອນອິສຣາແອນ. ພວກເຮົາລ້ວນແຕ່ເປັນຜູ້ທຳງານໃນສວນອະງຸ່ນຂອງພຣະເຈົ້າອັນແມ່ນພຣະກຣິສຕະຈັກ. ແຕ່ພວກເຮົາບໍ່ໄດ້ຟັງວາຈາຂອງພຣະອົງ, ບໍ່ໄດ້ປະຕິບັດຕາມພຣະທຳບັນຍັດຂອງພຣະອົງ. ດັ່ງນີ້, ວັນທີ່ພຣະອົງຈະກັບມາອີກຄັ້ງໜຶ່ງອັນແມ່ນວັນພິພາກສາຕັດສິນ, ພຣະອົງຈະໄລ່ພວກເຮົາອອກຈາກອານາຈັກຂອງພຣະອົງ ແລະໃຫ້ຄົນຊາດອື່ນທີ່ຟັງແລະປະຕິບັດຕາມວາຈາຂອງພຣະອົງເຂົ້າມາແທນບ່ອນພວກເຮົາ.

**ພາວະນາ**

ໂອພຣະເຈົ້າ ໂຜດຊ່ວຍລູກໃຫ້ສຳນຶກໄດ້ເຖິງຄວາມຮັກເມດຕາຂອງພຣະອົງທີ່ໄດ້ຊົງເລືອກສັນລູກໃຫ້ເປັນປະຊາກອນສັກສິດຂອງພຣະອົງ. ໂຜດໃຫ້ລູກຮູ້ຈັກເຊື່ອຟັງວາຈາຂອງພຣະອົງແລະນຳມາປະຕິບັດໃຫ້ເກີດໝາກຜົນອັນດີງາມໃນຊີວິດຂອງລູກແລະໃນພຣະກຣິສຕະຈັກຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ